— ອະນາໄມດັບກິ່ນ: ໃຊ້ນ້ຳສະກັດຊີວະພາບສົດ ເພື່ອກຳຈັດກິ່ນເໝັນໃນຫ້ອງນ້ຳ(ສ້ວມຖ່າຍຈະນານເຕັມຖ້າໃສ່ ເປັນປະຈຳ), ຖອກໃສ່ຕະຄອງຮ່ອງນ້ຳ, ທາບາດແຜ. ທາ ບອ່ນແມງໄມ້ຕອດ ຂົບ, ທາຕຸ່ມ, ໃຊ້ຖູເຮືອນ (3 ບ່ວງ ຕໍ່ ນ້ຳ 1 ຄຸ), ລ້າງ ຈານ, ດັບກິ່ນຕົວ (ສຳລັບອະ ນາໄມແມ່ນເຮັດຈາກໝາກ ນາວ ແລະ ໝາກຂີ້ຫູດແມ່ນດີ)

## ຄຸນປະໂຫຍດ

1. ປັບປຸງໂຄງສ້າງຂອງດິນ ແລະ ເພີ້ມປະລິມານອິນຊີວັດຖຸ ໃນດິນ ແລະ ຮັກສາຄວາມ ອຸດົມສົມບູນຂອງດິນ
2. ຮັກສາຄວາມຊຸ່ມຊື່ນໃນດິນ ແລະ ຊ່ວຍການຖ່າຍເທອາກາດໃນດິນໄດ້ດີຂື້ນ
3. ເພີ້ມທາດອາຫານທີ່ພືດຕ້ອງການໃຫ້ກັບດິນ ໂດຍສະເພາະເພີ້ມທາດໃນໂຕຣເຈັນໃຫ້ແກ່ດິນ
4. ບໍ່ເປັນອັນຕະລາຍຕໍ່ສິ່ງທີ່ມີຊີວິດໃນດິນ, ດິນ ແລະ ພືດເຖິງ ຈະໃຊ້ໃນປະລິມານຫລາຍ ແລະ ຕໍ່ເນື່ອງກໍຕາມ
5. ບໍ່ເປັນອັນຕະລາຍຕໍ່ຜູ້ຜະລິດ, ຜູ້ບໍລິໂພກ ແລະ ສະພາບແວດລ້ອມ.
6. ຊ່ວຍຫລຸດຜ່ອນການລະບາດຂອງສັດຕູພືດ
7. ຜົນຜະລິດມີລົດຊາດແຊບ, ເກັບຮັກສາໄວ້ດົນ, ໃຫຍ່ໄວ, ສີ ສັນແບບທຳມະຊາດ ແລະ ມີນ້ຳໜັກດີ.
8. ອະນາໄມດັບກິ່ນໄດ້ດີ
9. ສັດໃຫຍ່ໄວ, ສັດແຂງແຮງດີ, ບໍ່ເປັນພະຍາດ, ກິນອາຫານໄດ້ດີ, ມີນ້ຳໜັກດີ ແລະ ຂີ້ສັດບໍ່ເໝັນ.
10. ປັບປຸງ ແລະ ເຮັດໃຫ້ສະພາບແວດລ້ອມດີຂື້ນ
11. ຜະລິດງ່າຍ, ລົງທຶນຕ່ຳ ແລະ ໃຊ້ເວລາໜ້ອຍ.
12. ຜົນຜະລິດເພີ້ມຂື້ນ ແລະ ມີຄວາມຍືນຍົງ

## ວິທີເກັບຮັກສາ

ສາມາດເກັບຮັກສາໄວ້ຖັງຢາງ ຫລື ຕຸກຢາງ ອັດຝາໄວ້ໃຫ້ແຈບດີ ເກັບໄວ້ໄດ້ດົນກວ່າ 1—2 ປີ ການເກັບຮັກສາແມ່ນບໍ່ໃຫ້ຖືກແດດ (ຄວນເກັບມ້ຽນ ໃນບ່ອນທີ່ມີອາກາດລ່ວງດີ)
ໝາຍເຫດ: ນ້ຳສະກັດຊີວະພາບທີ່ມີຄຸນນະພາບ ຈະມີກິ່ນຫອມຄືກັບເຫລົ້າ.
ຖ້າມີກິ່ນເໝັນແມ່ນໃຊ້ບໍ່ໄດ້.







## ສະຖານທີ່ຕິດຕໍ່


### ສພກສຍ

ບ້ານ ໂພນສະຫວັນໄຕ້ ໜ່ວຍ 02
ນະຄອນຫລວງວຽງຈັນ
ຕູ້ ປ ນ 4881

ໂທລະສັບ / ໂທລະສານ: (021) 264290
Email: saflao@laopdr.com
www.saedalao.org


# ນ້ຳສະກັດຊີວະພາບ

# (ປຸ໋ຍນ້ຳ)



**Bio-Extract (BE)**

ເພື່ອສຸຂະພາບຂອງຜູ້ຜະລິດ ແລະ ຜູ້ບໍລິໂພກ
ພັດທະນາເສດຖະກິດ, ສິ່ງແວດລ້ອມ ແລະ
ປະເທດຊາດ

## ນ້ຳສະກັດຊີວະພາບ

ແມ່ນ ນ້ຳບີອີ ຫລື ປຸ໋ຍນ້ຳ ເປັນປຸ໋ຍທຳມະຊາດຊະນິດໜຶ່ງ ທີ່ເປັນທາດແຫລວ ມີທັງຈຸລິນຊີ ແລະ ສານອິນຊີຫລາຍຊະນິດ ທີ່ມີປະໂຫຍດ ເຊິ່ງເປັນຕົວຍ່ອຍສະຫລາຍອິນຊີວັດຖຸໃນດິນໃຫ້ກາຍເປັນຝຸ່ນ ເພື່ອປັບປຸງບຳລຸງດິນ. ຝຸ່ນດັ່ງ ກ່າວສາມາດເຮັດເອງໄດ້, ຜະລິດງ່າຍ, ໃຊ້ເວລາໜ້ອຍ, ຕົ້ນ ທຶນຕ່ຳ ແລະ ນຳໃຊ້ຊັບພະຍາກອນທີ່ມີຢູ່ໃນພື້ນທີ່ ເຊັ່ນ ເສດວັດຖຸເຫລືອໃຊ້. ສາມາດເຮັດໄດ້ສອງສູດຄື: ສູດທີ່ເຮັດຈາກເສດພືດຜັກ ແລະ ເສດທີ່ເຮັດຈາກສັດ (ຫອຍ, ປູ...)

## ສ່ວນປະສົມ ແລະ ວິທີຜະລິດ

<u>ສູດທີ1:</u> *ນ້ຳສະກັດຊີວະພາບເຮັດຈາກພືດຜັກ*

1. ຖັງຢາງມີຝາປິດເຊັ່ນ: ຖັງສີ, ຖັງດຳ ຫລື ຖັງຂຽວທີ່ມີຂາຍຢູ່ຕາມທ້ອງຕະຫຼາດ.
2. ເສດພືດຜັກສົດ ຫຼື ເສດເປືອກໝາກໄມ້ສົດ (ບໍ່ຮ່ຽວ ແລະ ບໍ່ເນົ່າ) 3 ກິໂລ
3. ນ້ຳຕານ, ນ້ຳອ້ອຍສົດ ຫຼື ກາກນ້ຳຕານ1 ກິໂລ

<u>ວິທີຜະລິດ</u>

—ຄວນລ້າງຖັງໃຫ້ສະອາດກ່ອນ
—ນຳເສດຜັກ ຫຼື ເສດເປືອກໝາກໄມ້ ມາຊັ່ງໃຫ້ໄດ້ຕາມອັດຕາສ່ວນ ແລ້ວຕັດເປັນຕ່ອນນ້ອຍໆໃສ່ລົງໃນຖັງທີ່ໄດ້ກະກຽມໄວ້.
—ໃສ່ນ້ຳຕານ ຕາມອັດຕາສ່ວນທີ່ກ່າວມາຂ້າງເທິງ ແລ້ວ ປິດຜາຖັງໄວ້, ແລ້ວນຳເອົາຖັງໄປເກັບໄວ້ຢູ່ຮົ່ມ
—ປະໄວ້ປະມານ 7 ວັນຂຶ້ນໄປ ກໍສາມາດຕອງເອົານ້ຳສະກັດຊີວະພາບ (ນ້ຳຫົວເຊື້ອ) ໄປໃຊ້ໄດ້.

<u>ວິທີຂະຫຍາຍ:</u> ຂະຫຍາຍໃສ່ໃນຖັງໝັກ
ເຕີມນ້ຳຕານ ຫຼື ນ້ຳອ້ອຍສົດ ຫຼື ກາກນ້ຳຕານ 1 ກິໂລ ແລະ. ນ້ຳ 10 ລິດ ໃສ່ໃນຖັງໝັກ ແລ້ວອັດຝາຖັງໄວ້ ປະມານ 3 ວັນຂຶ້ນໄປກໍສາມາດນຳໄປໃຊ້ໄດ້.

<u>ສູດທີ2:</u> *ນ້ຳສະກັດຊີວະພາບເຮັດຈາກສັດ*

1. ນຳໃຊ້ຖັງຢາງທີ່ມີຝາປິດຄືກັນ.
2. ຫອຍສົດຊະນິດໃດກໍໄດ້ (ດີແທ້ແມ່ນຫອຍປາກກ້ວາງ ເພາະທຳລາຍເຂົ້າຂອງເຮົາ) ຫຼື ກະປູສົດ ຫຼື ສັດອື່ນໆທີ່ມີ ປະມານ 1 ກິໂລ
3. ນ້ຳຕານ ຫຼື ນ້ຳອ້ອຍສົດ ຫຼື ກາກນ້ຳຕານ1 ກິໂລ

<u>ວິທີຜະລິດ</u>

1. ນຳເອົາຫອຍ ຫຼື ກະປູ ຫຼື ສັດອື່ນໆ ມາຊັ່ງຕາມອັດຕາສ່ວນ ແລ້ວທັບໃຫ້ປົ້ຫອຍແຕກ ເອົາທັງປົ້ ແລະ ຊີ້ນໃສ່ລົງໃນຖັງທີ່ກຽມໄວ້.
2. ໃສ່ນ້ຳຕານ ຫຼື ນ້ຳອ້ອຍສົດ ຫຼື ກາກນ້ຳຕານ (ມີຊະນິດໃດກໍໄດ້) ຕາມອັດຕາສ່ວນທີ່ກ່າວຂ້າງເທິງນັ້ນ

—ນຳເອົາໝາກຮຸ່ງອ່ອນມາປາດໃສ່ປະມານ 1 ກຳມື ເພື່ອ ໃຫ້ຢາງໝາກຮຸ່ງເປັນຕົວຊ່ວຍຍ່ອຍສະຫລາຍປົ້ຫອຍ.
—ປິດຝາຖັງປະໄວ້ປະມານ 7 ວັນ ແລ້ວເຕີມນ້ຳລົງໃສ່ 3 ລິດ ປະໄວ້ 3 ອາທິດ ກໍສາມາດນຳເອົານ້ຳນັ້ນໄປໃຊ້ໄດ້ ແຕ່ຖ້າຕ້ອງການຢາກໝັກໃນຖັງໄວ້ດົນ (6 ເດືອນຂຶ້ນໄປ ແທ່ງ ເປັນການດີ ແລະ ຄວນເອົາໄມ້ຄົນຖັງຫອຍຢ່າງນ້ອຍ 2 ເທື່ອຕໍ່ອາທິດ ເພື່ອໃຫ້ປົ້ຫອຍແຕກໄວ)
—ເກັບໄວ້ໃນຮົ່ມ.









## ວິທີນຳໃຊ້

— ເສດຂອງນ້ຳສະກັດຊີວະພາບທີ່ເຮັດຈາກພືດ ສາມາດ ເອົາໄປປະສົມກັບດິນຕອນກຽມໜານຜັກ, ໃສ່ຕົ້ນໄມ້ ໃຫ້ໝາກ ແລະ ປະສົມກັບອາຫານສັດ.
— ນາເຂົ້າ ແລະ ກ້າ ມີ 3 ວິທີໃຊ້ຄື:
- ປະສົມນ້ຳສະກັດຊີວະພາບ 1—3 ບ່ວງແກງ ກັບນ້ຳ 10 ລິດ ນຳໄປສີດໃຫ້ທົ່ວ (ສີດ 3—5 ເທື່ອຕໍ່ລະດູ)
-ໃຊ້ແບບໃສ່ຄຸ ແລ້ວເອົາໂອຕັກສາດໃຫ້ທົ່ວພື້ນທີ່ (5—8 ເທື່ອຕໍ່ລະດູ) ນ້ຳສະກັດຊີວະພາບ 1—3 ບ່ວງ ແກງ ປະສົມນ້ຳ 10 ລິດ
-ໃຊ້ແບບຢອດໃສ່ທ້າງນາ ຫຼື ຢອດເປັນຈຸດຕາມເນື້ອທີ່ນາ ໂດຍເອົານ້ຳສະກັດຊີວະພາບສົດ (ໃສ່ 5—10 ເທື່ອຕໍ່ລະດູ)

—ພືດຜັກຕ່າງໆ, ເບ້ຍໄມ້, ດອກໄມ້ ແລະ ໄມ້ໃຫ້ໝາກ: ນ້ຳສະກັດຊີວະພາບ (ຈະເປັນນ້ຳສະກັດຊີວະພາບທີ່ເຮັດຈາກສັດ ຫຼື ພືດກໍໄດ້) 1 ບ່ວງແກງ ປະສົມນ້ຳ 10 ລິດ (1 ຄຸ ຫຼື 1 ບົວຫົດຜັກ) ນຳໄປຫົດ ຫຼື ສີດທຸກໆວັນ.
—ລ້ຽງສັດ: ໃຊ້ນ້ຳສະກັດຊີວະພາບ 1ບ່ວງ ປະ ສົມ ນ້ຳ 10 ລິດ ແລ້ວປະສົມກັບອາຫານເກືອສັດທຸກໆມື້ (ສຳລັບເກືອສັດດີແທ້ແມ່ນນ້ຳສະກັດ ຊີວະພາບເຮັດ ຈາກ ເຄືອເຂົາຮໍ ແລະ ວິທີເຮັດແມ່ນຄືກັນກັບສູດພືດຜັກ)